**ມາດຕາ 13. ວິທີ ແລະຂັ້ນຕອນການໄກ່ເກ່ຍ**

ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ດຳເນີນການໄກ່ເກ່ຍຂໍ້ຂັດແຍ່ງຕ່າງໆຕາມວິທີ ແລະຂັ້ນຕອນ ດັ່ງນີ້:

1. ເມື່ອໄດ້ຮັບການສະເໜີ ຫຼືຮ້ອງຂໍຂອງພົນລະເມືອງແລ້ວ ໜ່ວຍໄກ່ເກ່ຍຕ້ອງແຈ້ງ ໃຫ້ຄູ່ກໍລະນີຊາບ ແລ້ວຈັດຕັ້ງຄົ້ນຄ້ວາພິຈາລະນາຂໍ້ຂັດແຍ່ງນັ້ນພາຍໃນ 7 ວັນ ໂດຍສືບຮູ້, ເກັບກຳຂໍ້ມູນຫຼັກຖານຕົວຈິງເພື່ອເປັນບ່ອນອີງໃນການໄກ່ເກ່ຍ. ໜ່ວຍໄກ່ເກ່ຍເປັນຜູ້ກຳນົດວັນ, ເວລາ, ສະຖານທີ່, ເຊີນຄູ່ກໍລະນີທີ່ຂັດແຍ່ງ ແລະພະຍານເຂົ້າຮ່ວມການໄກ່ເກ່ຍ;

   ການດຳເນີນການໄກ່ເກ່ຍແຕ່ລະຄັ້ງ ຈະດຳເນີນໄດ້ກໍຕໍ່ເມື່ອມີຄະນະຫຼາຍກວ່າເຄິ່ງໜຶ່ງເຂົ້າຮ່ວມ. ໃນກໍລະນີທີ່ຈຳເປັນ ອາດເຊີນຜູ້ກ່ຽວຂ້ອງ ຫຼືປະຊາຊົນຈຳນວນໜຶ່ງມາຮ່ວມນຳກໍໄດ້ ເພື່ອຊ່ວຍປະກອບຄຳຄິດຄຳເຫັນຕື່ມ;

2. ຖ້າຫາກຄູ່ກໍລະນີຝ່າຍໃດຝ່າຍໜຶ່ງ ບໍ່ເຂົ້າມາຮ່ວມການໄກ່ເກ່ຍຕາມການເຊີນຫຼາຍກວ່າສາມຄັ້ງໂດຍບໍ່ມີເຫດຜົນ ໃຫ້ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານສົ່ງຄຳຮ້ອງ ຫຼືໃບສະເໜີພ້ອມເອກະສານທັງໝົດຄືນໃຫ້ແກ່ຜູ້ຮ້ອງຂໍໃນເບື້ອງຕົ້ນ ເພື່ອໄປຮ້ອງຟ້ອງຕໍ່ອົງການທີ່ມີສິດອຳນາດຕາມຂະບວນການຍຸຕິທຳ;

3. ການໄກ່ເກ່ຍຄະດີເດັກ ຕ້ອງໃຫ້ມີພໍ່, ແມ່ ຫຼືຜູ້ປົກຄອງຂອງເດັກເຂົ້າຮ່ວມທຸກຄັ້ງ;

4. ໃນການໄກ່ເກ່ຍແຕ່ລະຄັ້ງ ຕ້ອງເຮັດບົດບັນທຶກເປັນລາຍລັກອັກສອນ ແລ້ວອ່ານຊ້ອງໜ້າຄູ່ກໍລະນີທີ່ຂັດແຍ່ງ, ພະຍານ ແລະຜູ້ເຂົ້າຮ່ວມແລ້ວລົງລາຍເຊັນໄວ້ເປັນຫຼັກຖານ.

   ເນື້ອໃນບົດບັນທຶກ ຈະຕ້ອງຂຽນຢ່າງລະອຽດຈະແຈ້ງກ່ຽວກັບລາຍຊື່ຄະນະ ແລະຜູ້ເຂົ້າຮ່ວມ, ສະຖານທີ່, ວັນເວລາໄກ່ເກ່ຍ, ເຫດການຕົວຈິງທີ່ເກີດຂໍ້ຂັດແຍ່ງ, ການໃຫ້ການຂອງຄູ່ຂັດແຍ່ງ, ການຕົກລົງຍິນຍອມແກ້ໄຂ ຫຼືບໍ່ຍິນຍອມແກ້ໄຂຂອງຄູ່ຂັດແຍ່ງ ແລະອື່ນໆ;

5. ຖ້າຄູ່ກໍລະນີຫາກຍັງບໍ່ສາມາດຕົກລົງກັນໄດ້ ໃຫ້ຄະນະໜ່ວຍໄກ່ເກ່ຍນຳສະເໜີໃຫ້ຄະນະພັກຮາກຖານກຸ່ມບ້ານຊ່ວຍສຶກສາອົບຮົມຕື່ມ, ຖ້າຫາກບໍ່ສາມາດປະນີປະນອມກັນໄດ້ໃຫ້ສົ່ງບົດບັນທຶກພ້ອມກັບສຳນວນຂໍ້ຂັດແຍ່ງໄປໃຫ້ຫ້ອງການຍຸຕິທຳເມືອງເພື່ອສຶກສາອົບຮົມໄກ່ເກ່ຍຕື່ມອີກ ແລະຖ້າຍັງບໍ່ທັນສຳເລັດຈຶ່ງແນະນຳໃຫ້ຄູ່ກໍລະນີທີ່ຂັດແຍ່ງໄປຮ້ອງຟ້ອງຕໍ່ອົງການທີ່ມີສິດອຳນາດດຳເນີນຄະດີຕາມຂະບວນການຍຸຕິທຳ;

6. ການໄກ່ເກ່ຍຂໍ້ຂັດແຍ່ງ ຖ້າຄູ່ກໍລະນີບໍ່ສາມາດຕົກລົງກັນຈະເຮັດຫຼາຍເທື່ອກໍໄດ້ ແຕ່ບໍ່ໃຫ້ເກີນສາມຄັ້ງ;

   ໃນກໍລະນີຫາກມີຄວາມຈຳເປັນຕ້ອງໄດ້ໃຊ້ຈ່າຍເຂົ້າໃນການໄກ່ເກ່ຍຄັ້ງຕໍ່ມາອີກນັ້ນ ແມ່ນມອບໃຫ້ຄູ່ກໍລະນີທີ່ຂັດແຍ່ງເປັນຜູ້ຮັບຜິດຊອບ, ແຕ່ບໍ່ໃຫ້ເກີນ 50.000 ກີບ.